ການຂຽນຄຳທຳນວາຍ



ບົດທີ 6 ສຳລັບສະບາໂຕທີ 7 ພະຈິກ, 2026



“ທຸກສິ່ງທີ່ມີຄຳຂຽນໄວ້ໃນພຣະຄຳພີ ກໍມີໄວ້ເພື່ອສັ່ງສອນພວກເຮົາ ເພື່ອວ່າພວກເຮົາຈະມີຄວາມຫວັງດ້ວຍ
ຄວາມອົດທົນ ແລະມີຄວາມຊູໃຈ ດ້ວຍພຣະຄຳພີທີ່ໄດ້ກ່າວໄວ້ນັ້ນ.”
ໂຣມ 15:4

ເຖິງວ່າພຣະຄຳພີຈະເປັນຂອງພຣະເຈົ້າ, ແຕ່ພຣະອົງບໍ່ໄດ້ຂຽນພຣະຄຳພີດ້ວຍຕົວຂອງພຣະອົງເອງ ແຕ່ຊົງໃຊ້ ມະນຸດຜູ້ທີ່ໄດ້ຮັບການດົນໃຈເປັນຜູ້ຂຽນ

ທັງນີ້, ພຣະອົງບໍ່ໄດ້ຊົງບອກໃຫ້ຂຽນຕາມຄຳທີ່ພຣະອົງບອກ (ຄຳຕໍ່ຄຳ), ແຕ່ຊົງບອກໃຫ້ພວກເຂົາຂຽນສິ່ງທີ່ພຣະອົງຊົງສະແດງ ຫລື ດົນໃຈສິ່ງທີ່ພຣະອົງໃຫ້ພວກເຂົາເຫັນທາງຄວາມຄິດ.
ພຣະອົງຊົງປະທານອິດສະຫລະໃຫ້ແກ່ພວກເຂົາໃຫ້ເລືອກໃນລະດັບໜຶ່ງໃນການໃຊ້ຖ້ອຍຄຳ, ຮູບແບບການຂຽນ ແລະ ຖ້ອຍຄຳອື່ນໆ ເພື່ອ ຖ່າຍທອດຂ່າວສານຈາກພຣະອົງ.






- ການຂຽນຄຳທຳນວາຍ:
  - ພວກເຂົາຂຽນຢູ່ໃສ ແລະ ເປັນຫຍັງຈຶ່ງຂຽນ?
  - ຂຽນຂຶ້ນດ້ວຍຮູບແບບໃດ?
- ການໃຊ້ຜູ້ຊ່ວຍໃນການຂຽນ ແລະ ຂໍ້ມູນຈາກພາຍນອກ:
  - ເປັນຫຍັງຈຶ່ງຕ້ອງມີຜູ້ຊ່ວຍໃນການຂຽນ?
  - ຜູ້ທຳນວາຍໃຊ້ຂໍ້ມູນພາຍນອກຈາກໃສ?
- ຄວາມເປັນມະນຸດທີ່ຜະສົມຜະສານຢູ່ໃນພຣະທຳຂອງພຣະເຈົ້າ:
  - ພຣະຄຳພີມີສິ່ງທີ່ບໍ່ສົມບູນຫລືບໍ?

ການຂຽນຄຳທຳນວາຍ

ພວກເຂົາຂຽນຢູ່ໃສ? ແລະ ເປັນຫຍັງຈຶ່ງຂຽນ

ພຣະເຈົ້າໄດ້ບອກຂ້າພະເຈົ້າໃຫ້ຂຽນລົງໃສ່ໜັງສືມ້ວນໜຶ່ງວ່າ ປະຊາຊົນເປັນຢ່າງໃດເພື່ອຈະໄດ້ບັນທຶກໄວ້ເປັນການຖາວອນກວ່າ ພວກເຂົາຊົ່ວຊ້ານຳໃດ.” (ອຊຢ 30:8ı)

ໂມເຊເປັນຄົນທຳອິດທີ່ໄດ້ຮັບການດົນໃຈຈາກພຣະເຈົ້າໃຫ້ຂຽນເລື່ອງໃນພຣະຄຳພີ. ໃນຖິ່ນແຫ້ງແລ້ງກັນດານມີດີອານ, ເພິ່ນໄດ້ຂຽນໜັງສື ໂຢບ ແລະ ປະຖົມມະການ. ໃນລະຫວ່າງຂອງການອົບພະຍົບ, ເພິ່ນໄດ້ຮັບການດົນໃຈແບບກະທັນຫັນໃຫ້ບັນທຶກເຫດການຕ່າງໆໂດຍກົງໄວ້ (ອພຍ 17:14).



ຜູ້ທຳນວາຍຄົນອື່ນໆທີ່ໄດ້ຮັບຄຳສັ່ງໃຫ້ຈົດບັນທຶກແມ່ນ ທ່ານ ເອຊາຢາ (ອຊຢ 30:8); ເຢເຣມີຢາ (ຢຣມຢ 36:2); ຮາບາກຸກ (ຮບກ 2:2); ແລະ ໂຢຮັນ (ພນມ 1:11).

ຜູ້ຂຽນພຣະຄຳພີໄດ້ຂຽນພາຍໃຕ້ສະຖານະການທີ່ແຕກຕ່າງກັນ:











ພຣະອົງຊົງເລືອກທັງບຸກຄົນ ແລະ ທັງສິ່ງທີ່ພວກເຂົາຕ້ອງບັນທຶກໄວ້ ໂດຍມີພຣະປະສົງບໍ່ໃຫ້ສິ່ງທີ່ພຣະອົງຕ້ອງການເປີດເຜີຍໃຫ້ແກ່ພວກເຮົານັ້ນ ສູນຫາຍໄປ (2 ຕມທ 3:15).

ຂຽນຂຶ້ນດ້ວຍຮູບແບບໃດ



"ເປັນບົດເພງອັນໜ້າອອມຊອນທີ່ສຸດຂອງໂຊໂລໂມນ" (ຍອດເພງ 1:1)


ພຣະຄຳພີຖືກຂຽນຂຶ້ນໃນຊ່ວງເວລາ 1,500 ປີ, ໂດຍຜູ້ຂຽນຫລາຍກວ່າ 40 ຄົນ ໃນຮູບແບບທີ່ແຕກຕ່າງກັນເຊັ່ນ:



- ບັນທຶກທາງປະຫວັດສາດ (ປຖມກ. 37:2)
- ລຳດັບເຊື້ອສາຍ (ປຖມກ. 5:1)
- ຄຳທຳນວາຍ (ອຊຢ. 13:1)
- ນິມິດກ່ຽວກັບອາລະສຸດທ້າຍ (ພນມ. 12:1)
- ບົດກອນ (ສ່ວນໃຫຍ່ຂອງພຣະຄຳເອຊາຢາ)
- ບົດເພງ (ຍອດເພງ 1:1)
- ຄຳປຽບທຽບ (ອຊຢ 17:7)
- ຄຳອຸປະມາ (ລກ 18:1)
- ຈົດໝາຍ (2 ທສລນ 3:17)

ພຣະຄຳພີບໍ່ໄດ້ແບ່ງແຍກຄວາມສຳຄັນ ຫລືຮູບແບບອຳນາດຂອງການຂຽນແຕ່ລະແບບ, ເພາະທຸກຮູບແບບລ້ວນແຕ່ມີປະໂຫຍດໃນການຖ່າຍທອດຄວາມຄິດຈາກພຣະເຈົ້າ, ເນື່ອງຈາກແຕ່ລະຄົນສາມາດເຂົ້າໃຈຂ່າວສານໄດ້ດີກວ່າ ຜ່ານທາງຮູບແບບການຂຽນທີ່ແຕກຕ່າງກັນໄປ

ທ່ານ ເປໂຕ ຍັງໄດ້ລະບຸໄວ້ຢ່າງຊັດເຈນວ່າ: ການຂຽນໃນພັນທະສັນຍາໃໝ່ນັ້ນ ມີອຳນາດທຽບເທົ່າກັບການຂຽນໃນພັນທະສັນຍາເດີມ (2 ເປໂຕ 3:15-16)





๓ตามใช้ผู้ช่วยในการชุม และ ๒ มุมจากภายนอก


ເປັນຫຍັງຈຶ່ງຕ້ອງມີຜູ້ຊ່ວຍໃນການຂຽນ?

ດັ່ງນັ້ນ ຂ້າພະເຈົ້າຈຶ່ງເອີ້ນບາຣຸກ ລູກຊາຍຂອງເນຣີຢາເຂົ້າມາຫາ; ແລະ ໃຫ້ຂຽນທຸກໆຖ້ອຍຄຳທີ່ພຣະເຈົ້າຢາເວໄດ້ບອກຂ້າພະເຈົ້າ, ແລ້ວບາຣຸກກໍໄດ້ຂຽນຖ້ອຍຄຳທັງໝົດລົງໃນເຈ້ຍມ້ວນນັ້ນ (ຢຣມຢ 36:4)



ທ່ານເຢເຣມີຢາ ແມ່ນປະໂລຫິດ, ເພິ່ນຈຶ່ງມີຄວາມສາມາດໃນການອ່ານ, ຂຽນ ແຕ່ຢ່າງໃດກໍຕາມເພິ່ນຍັງມີຜູ້ຊ່ວຍຄົນໜຶ່ງຊື່—ບາຣຸກ—ເພື່ອຊ່ວຍເພິ່ນຂຽນຂໍ້ຄວາມທີ່ພຣະເຈົ້າຊົງບອກ (ຢຣມຢ 36:1-4). ເຖິງຈະເປັນສິ່ງທີ່ພຣະເຈົ້າຊົງອະນຸຍາດ, ແຕ່ກໍຍັງມີຜູ້ຄົນເຂົ້າໃຈຜິດກ່ຽວກັບການກະທຳດັ່ງກ່າວ (ຢຣມຢ 43:2-3).

ອຈ ໂປໂລ ຜູ້ຊົງມີຄວາມຊ່ຽວຊານໃນພາສາກຣີກ ກໍ່ມີຜູ້ຊ່ວຍໃນການຂຽນຈົດໝາຍຕ່າງໆເຊັ່ນກັນ (ໂຣມ 16:22). ເພື່ອປ້ອງກັນບໍ່ໃຫ້ຜູ້ອື່ນປອມແປງຈົດໝາຍຂອງທ່ານ, ເພິ່ນຈຶ່ງລົງລາຍເຊັນຂອງເພິ່ນເອງກຳກັບໄວ້ໃນຈົດ ໝາຍທີ່ເພິ່ນບອກໃຫ້ຄົນອື່ນຂຽນແທນເພິ່ນ (2 ທສລນກ. 3:17).





ເຊິ່ງເປັນການຍາກທີ່ຈະເຊື່ອວ່າທ່ານເປໂຕ ຜູ້ເປັນຊາວປະມົງທີ່ໃຊ້ພາສາອາຣາມິກ ເປັນພາສາຫລັກ ຈະຂຽນຈົດໝາຍໂດຍໃຊ້ພາສາກຣີກທີ່ສວຍງາມ, ແຕ່ເພິ່ນໃຊ້ຜູ້ຊ່ວຍທີ່ຮູ້ພາສາກຣີກຂຽນ, ການໃຊ້ຜູ້ຊ່ວຍໃຫ້ຖ່າຍທອດ ຂໍ້ຄວາມໃຫ້ຖືກຕ້ອງໃນພາສາທີ່ທ່ານ ບໍ່ມີຄວາມຊຳນານ, ແຕ່ການທີ່ຜູ້ຊ່ວຍຂອງທ່ານເປໂຕ ໄດ້ຖ່າຍທອດແລະເລືອກໃຊ້ ພາສາ, ຄວາມຄິດຂອງທ່ານເປໂຕນັ້ນ ບໍ່ໄດ້ຫລຸດຄຸນຄ່າຂອງການໄດ້ຮັບການດົນໃຈ ຈາກພຣະເຈົ້າ ແຕ່ຢ່າງໃດເລີຍ.

ຜູ້ທຳນວາຍໃຊ້ຂໍ້ມູນພາຍນອກຈາກໃສ?

"ດັ່ງນັ້ນແຫລະ ທ່ານເທໂອຟີໂລທີ່ນັບຖື ຫລັງຈາກທີ່ຂ້າພະເຈົ້າໄດ້ສຶກສາຢ່າງຖີ່ຖ້ວນຮອບຄອບ ເຖິງສິ່ງເຫຼົ່ານີ້ທັງໝົດແລ້ວ ຕັ້ງແຕ່ຕົ້ນ ຂ້າພະເຈົ້າຈຶ່ງເຫັນດີຮຽບຮຽງເລື່ອງລາວຕາມລຳດັບເພື່ອປະໂຫຍດແກ່ທ່ານ."ລູກາ 1:3

ທ່ານເອຊະຣາ ໄດ້ໃຊ້ບົດບັນທຶກທາງປະຫວັດສາດ. ລວມໄປເຖິງການສຳເນົາຄຳສັ່ງແລະການຕອບຮັບຂອງ ກະສັດເປີເຊຍ ຕອນທີ່ເພິ່ນຂຽນພຣະຄຳ ຂ່າວຄາວ ແລະ ເອຊະຣາ. ສ່ວນເຢເຣມີຢາ ໄດ້ນຳເອົາບາງສ່ວນຂອງ ໜັງສືມາໃສ່ໃນໜັງສືຂອງ ເພິ່ນເຊັ່ນກັນ






ເນື່ອງຈາກທ່ານ ລູກາ ບໍ່ໄດ້ເປັນພະຍານໃນເຫດການ ຕ່າງໆທີ່ເພິ່ນໄດ້ບັນທຶກໄວ້, ເພິ່ນຈຶ່ງຂຽນພຣະທຳ ແລະ ຂຽນບາງສ່ວນຂອງພຣະທຳກິດຈະການໂດຍອາໄສບົດ ບັນທຶກທາງປະຫວັດສາດ ແລະ ການສຳພາດຜູ້ທີ່ຢູ່ໃນ ເຫດການຈິງ (ລກ 1:3).

ອຈ ໂປໂລ ຍົກເອົາຂໍ້ຄວາມຈາກທ່ານ Epimenides ແລະທ່ານ Aratus, ເຊິ່ງ ເປັນນັກ ຂຽນບູຮານມາອ້າງອີງ ກຈກ 17:28; ຕຕ 1:12). ຢດ, ສ່ວນຢູດາກໍນຳເອົາຂໍ້ຄວາມມາ ຈາກໜັງສືເຫລັ້ມໜຶ່ງທີ່ບໍ່ໄດ້ຢູ່ໃນສາລະບົບ ພຣະ ຄຳພີ, ເຊິ່ງມີຄຳພຣະຍາກອນຂອງທ່ານ ເອນົກຢູ່ນຳ (ຢດ1:14).




Epimenides



Arato

ໃນການນຳເອົາຂໍ້ມູນຈາກແຫລ່ງພາຍນອກເຫລົ່ານີ້ມານຳໃຊ້, ພວກ ເພິ່ນທັງໝົດຕ່າງກໍໄດ້ຮັບການຊີ້ນຳຈາກພຣະວິນຍານບໍຣິສຸດ, ພວກ ເພິ່ນຮູ້ດີວ່າ ສິ່ງທີ່ພວກເພິ່ນກຳລັງຖ່າຍທອດຢູ່ນັ້ນ ແມ່ນຄວາມຈິງ ແລະ ເປັນການສື່ເຖິງສິ່ງທີ່ພຣະເຈົ້າຕ້ອງການ ໃຫ້ພວກເພິ່ນເປີດເຜີຍ ອອກມາ.



Book of Enoch

ຄວາມເປັນມະນຸດທີ່ຜະສົມຜະສານຢູ່ໃນພຣະຄຳຂອງພຣະເຈົ້າ

ພຣະຄຳພີ ມີສິ່ງທີ່ບໍ່ສົມບູນຫລືບໍ່?

"ແຕ່ພວກເຮົາມີຊັບສົມບັດນີ້ ຢູ່ໃນພາຊະນະດິນ ເພື່ອໃຫ້ເຫັນວ່າ ຣິດອຳນາດອັນຍິ່ງໃຫຍ່ນັ້ນເປັນຂອງພຣະເຈົ້າ ບໍ່ໄດ້ມາຈາກພວກເຮົາເອງ." 2 ໂກຣິນໂທ 4:7

ໃນການຖ່າຍທອດຂ່າວສານຂອງພຣະເຈົ້າ, ພຣະອົງຊົງເລືອກໃຊ້ມະນຸດທີ່ບໍ່ສົມບູນແບບ ປຽບຄືກັບ ພາຊະນະດິນເຜົາ (2 ກຣທ 4:7). ຄວາມບໍ່ສົມບູນແບບນີ້ສົ່ງຜົນຕໍ່ຂ່າວສານແບບໃດ? ພຣະຄຳພີຍັງສາມາດເຊື່ອຖືໄດ້ 100% ບໍ່?

ຄຳສັບບູຮານ

⑩ຄຳສັບໃນພາສາເຮັບເຣີ, ອາຣາມິກ ຫລື ກຣີກ ທີ່ພວກເຮົາບໍ່ຮູ້ຄວາມໝາຍທີ່ແນ່ນອນ ເຊັ່ນ:

⑩Examples: *Gopher* (גֹּפֶר) (Gen. 6:14); *Selah* (סֶלָה) (used in several psalms)

ຄວາມຜິດພາດທີ່ເກີດຈາກການ ສຳເນົາ

⑩ໃນລະຫວ່າງການສຳເນົາຕົ້ນ ສະບັບຫລື ຕາມຄຳບອກເລົ່າ ຜູ້ຄັດລອກອາດເກີດຄວາມຜິດພາດໄດ້ (ພົບຫລາຍໃນພັນທະສັນຍາ ໃໝ່)

⑩Example: ຂໍ້ຄວາມທີ່ເພີ່ມເຂົ້າມາ "Johannine Comma" (1 ຢຮ 5:7-8). ເປັນຂໍ້ຄວາມທີ່ຜູ້ກ່າຍຄົນໜຶ່ງແຊກເພີ່ມເອົາໄວ້ ແລ້ວຕໍ່ມາຜູ້ຈົດກ່າຍຄົນອື່ນກໍນຳໄປລວມກັນໄວ້ໃນເນື້ອຫາຫລັກ

ຄວາມຜິດພາດທີ່ເກີດຈາກຜູ້ຂຽນເອງ

⑩ເມື່ອຜູ້ຂຽນພຣະຄຳພີອ້າງອີງຈາກຄວາມຈຳ ຫລື ເລົ່າເຖິງເຫດການທີ່ພວກເຂົາບໍ່ໄດ້ເຫັນດ້ວຍຕາຂອງພວກເຂົາເອງ, ກໍ່ສາມາດເຮັດໃຫ້ເກີດຄວາມຜິດພາດເລັກນ້ອຍທີ່ບໍ່ມີຜົນກະທົບໄດ້

⑩ຕົວຢ່າງ: ການອ້າງຂອງທ່ານມັດທາຍ ເຊິ່ງລາວໄດ້ເອີ້ນເຊກາຣີຢາ ຜູ້ທີ່ຖືກຂ້າໂດຍໂຢອາດ ນັ້ນ ວ່າເປັນລູກຊາຍຂອງ ເບເລກີຢາ (ມທ. 23:35; ເບິ່ງ ລກ 11:51; 2ຂຄ 24:22)

ຄວາມຜິດທີ່ເກີດຂຶ້ນຈາກຜູ້ແປ

⑩ຜູ້ແປພຣະຄຳພີ ໂດຍສະເພາະຜູ້ທີ່ແປເປັນພາສາປັດຈຸບັນອາດໄດ້ຮັບອິດທິພົນຈາກຄວາມຄິດຂອງຕົນເອງໄດ້

⑩ຕົວຢ່າງ: ບົດແປສະບັບທີ່ແຕກຕ່າງກັນ (MSG, NMB) ໄດ້ແປຂໍ້ຄວາມທີ່ກ່າວເຖິງ ວັນຂອງອົງພຣະຜູ້ເປັນເຈົ້າ (ພນມ. 1:10) ວ່າເປັນ "ວັນອາທິດ," ທັງໆທີ່ຄຳເຫລົ່ານີ້ມີການເລີ່ມໃຊ້ ຫລັງຈາກທີ່ອັກຄະສາວົກລ່ວງລັບໄປແລ້ວ

ຄວາມບໍ່ສົມບູນແບບຫລືຄວາມຜິດພາດເລັກນ້ອຍນີ້ ມີຈຳນວນໜ້ອຍຫລາຍ, ແລະ ໂດຍທົ່ວໄປພວກເຮົາສາມາດເຮັດໃຫ້ຄວາມເຂົ້າໃຈຜ່ານການສຶກສາ ຢ່າງເລິກເຊິ່ງ, ແລະ ສາມາດເຂົ້າໃຈໄດ້ວ່າ ຄວາມຈິງຈາກພຣະເຈົ້າໄດ້ຮັບການຖ່າຍທອດມາຮອດພວກເຮົາຢ່າງຊື່ຕົງ. ດັ່ງທີ່ມີບັນທຶກໄວ້ໃນພຣະຄຳພີ

“ພຣະເຈົ້າຊົງພໍພຣະໄທໃນການສື່ສານຄວາມຈິງຂອງພຣະອົງໄປຍັງໂລກໂດຍຜ່ານທາງມະນຸດ, ແລະ ຜ່ານ ພຣະອົງເອງ, ຊົງໃຫ້ພຣະວິນຍານບໍຣິສຸດຂອງພຣະອົງ ຊົງປະທານຄຸນສົມບັດໃຫ້ແກ່ມະນຸດ ແລະ ເຮັດໃຫ້ພວກເຂົາສາມາດເຮັດວຽກນີ້ໄດ້. ພຣະອົງໄດ້ຊົງນຳພາຈິດໃຈໃນການເລືອກສິ່ງທີ່ຈະເວົ້າ ແລະ ສິ່ງທີ່ຈະຂຽນ. ຂອບຊັບອັນປະເສີດໄດ້ຖືກຝາກໄວ້ໃນພາຊະນະດິນເຜົາ, ແຕ່ເຖິງຢ່າງໃດກໍຕາມ, ສິ່ງນັ້ນກໍມາຈາກສະຫວັນ. ຄຳພະຍານໄດ້ຖືກຖ່າຍທອດຜ່ານທາງການສະແດງອອກອັນບໍ່ສົມບູນແບບ ຂອງພາສາມະນຸດ, ແຕ່ສິ່ງນັ້ນກໍແມ່ນຄຳພະຍານຂອງພຣະເຈົ້າ; ແລະ ລູກຂອງພຣະເຈົ້າຜູ້ເຊື່ອຟັງ ແລະ ມີຄວາມເຊື່ອ ກໍໄດ້ເຫັນຮູບໂສມອັນຮຸ່ງເຮືອງຂອງອຳນາດແຫ່ງພຣະເຈົ້າ ທີ່ເຕັມໄປດ້ວຍພຣະຄຸນ ແລະ ຄວາມຈິງໃນພຣະຄຳນັ້ນ.

ໃນພຣະຄຳຂອງພຣະອົງ, ພຣະເຈົ້າໄດ້ຊົງມອບຄວາມຮູ້ທີ່ຈຳເປັນສຳລັບຄວາມລອດໃຫ້ແກ່ມະນຸດ. ພຣະຄຳພີບໍຣິສຸດຕ້ອງໄດ້ຮັບການຍອມຮັບວ່າເປັນການເປີດເຜີຍພຣະປະສົງຂອງພຣະອົງຢ່າງມີສິດ ທິອຳນາດ ແລະ ບໍ່ມີຄວາມຜິດພາດ.”

EGW (The Great Controversy, p. 6)

APPENDIX: ຄວາມປາສະຈາກຄວາມຜິດພາດຂອງວຽກການຂຽນຂອງທ່ານ ເອເລັນ ຈີ ໄວທ໌

ຕອນທີ່ພຣະເຈົ້າຊົງໃຫ້ທ່ານນາງ ເອເລັນ ຈີ ໄວທ໌ ຂຽນຂ່າວສານຂອງພຣະອົງ, ເພິ່ນໄດ້ຕອບວ່າ: ຂ້າພຣະເຈົ້າບໍ່ສາມາດຂຽນໄດ້, ແຕ່ພຣະເຈົ້າຊົງປະທານກຳລັງໃຈໃຫ້ແກ່ເພິ່ນ ແລະ ເພິ່ນກໍໄດ້ເລີ່ມຕົ້ນຂຽນ. ເມື່ອເວລາຜ່ານໄປ, ເພິ່ນໄດ້ມີຜູ້ຊ່ວຍທາງດ້ານການຂຽນ ທີ່ກວດແກ້ຄຳສະ ກົດຜິດ. ແລະ ປັບປຸງປະໂຫຍກໃຫ້ດີຂຶ້ນ.

ພວກເຂົາບໍ່ໄດ້ປ່ຽນແປງຄວາມໝາຍຂອງຂ່າວສານເລີຍ, ແລະ ບໍ່ໄດ້ເພີ່ມສິ່ງໃດສິ່ງໜຶ່ງທີ່ເປັນຂອງຕົນເອງເຂົ້າໄປ. ແລະຂັ້ນສຸດທ້າຍ ກໍໄດ້ຮັບການກວດສອບຈາກທ່ານນາງ ເອເລັນ ຈີ ໄວທ໌ ສະເໝີ.



Mary Ann “Marian” Davis (1847-1904), literary assistant. Photo courtesy of “Ellen G. White Estate, Inc.”



Sarah E. Peck, 1880s. Photo courtesy of “Center for Adventist Research .”



ກ່ຽວກັບຄວາມຜິດພາດເພິ່ນໄດ້ກ່າວວ່າ: ຂ້າພະເຈົ້າບໍ່ອາດເວົ້າໄດ້ວ່າ ຂ້າພະເຈົ້າບໍ່ມີຄວາມຜິດພາດ, ມີພຽງພຣະເຈົ້າເທົ່ານັ້ນ ທີ່ບໍ່ມີຄວາມຜິດພາດ (Selected Messages, vol. 1, p. 42).

ກ່ຽວກັບຄວາມບໍ່ມີຄວາມຜິດພາດໃນງານຂຽນຂອງລາວ, ເອເລັນ ໄດ້ອະທິບາຍວ່າ ມີບາງເວລາທີ່ ຈຳເປັນຕ້ອງໄດ້ເວົ້າ ຫຼື ຂຽນເຖິງເລື່ອງລາວທົ່ວໆໄປ, ຄວາມຄິດທົ່ວໆໄປ, ຫຼື ການແລກປ່ຽນຂໍ້ມູນຂ່າວສານປົກກະຕິລະຫວ່າງຜູ້ເຮັດວຽກນຳກັນ. ຂໍ້ຄວາມ ຫຼື ຂໍ້ມູນຂ່າວສານໃນລັກສະນະທົ່ວໄປເຫຼົ່ານັ້ນ ບໍ່ໄດ້ຖືກຂຽນຂຶ້ນພາຍໃຕ້ການດົນໃຈເປັນພິເສດຈາກພຣະວິນຍານຂອງພຣະເຈົ້າ (Selected Messages, vol. 3, p. 58). (Selected Messages, vol. 3, p. 64).

